SIFONGXAY et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 260 - 272

# ຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ

**ສັງທອງ ສີຟອງໄຊ*, ຈຳປາ ລັດຕະນະສຸວັນນະພົມ, ອໍລະໄທ ສີສະຫວັນ, ຂັນທະລີ ມີໄຊກອນ, ສົມຄິດ ສຸລິຍະສັກ, ດາລຸນນີ ອິນດາວົງ ແລະ ຈັນສະໝອນ ແສງດາລາ**

*ອາຈານສອນປະຈຳພາກວິຊາບໍລິຫານການທ່ອງທ່ຽວ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ*

***ຕິດຕໍ່ພົວພັນ:** ສັງທອງ ສີຟອງໄຊ, ພາກວິຊາບໍລິຫານການທ່ອງທ່ຽວ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ເບີໂທ: ໂທ: +856 20 2213 1326, ອີເມວ: st_sifongxay@hotmail.com.*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 11ສິງຫາ2021*

*ປັບປຸງສຳເລັດ: 29 ຕຸລາ 2021*

*ການຕອບຮັບ: 04 ພະຈິກ 2021*

**ບົດຄັດຫຍໍ້**

ການຄົ້ນຄວ້າວິໄຈໃນຄັ້ງນີ້ ມີຈຸດປະສົງໃນການຄົ້ນຄວ້າເພື່ອ 1) ສຶກສາສຶກສາພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ. 2) ວິເຄາະຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ. ກຸ່ມຕົວຢ່າງແມ່ນນັກທ່ອງທ່ຽວຕ່າງປະເທດທີ່ເດີນທາງເຂົ້າມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນປີ 2018 ຈຳນວນ 385 ຄົນ. ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄວ້າວິໄຈແມ່ນແບບສອບຖາມ ໂດຍການວິເຄາະຂໍ້ມູນດ້ວຍໂປຣແກຣມສຳເລັດຮູບ ແລະ ວິເຄາະເນື້ອໃນ ເຊິ່ງສະຖິຕິທີ່ໃຊ້ໃນການສຶກສາຄົ້ນຄວ້າວິໄຈໄດ້ແກ່: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າພັນປ່ຽນມາດຕະຖານ ແລະ ທົດສອບຄ່າ ໄຄວສະແຄຣ໌ (Chi-square).

ຜົນຈາກການຄົ້ນຄວ້າພົບວ່າ: ນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ສ່ວນໃຫຍ່ແມ່ນເປັນເພດຊາຍ ມີອາຍຸລະຫວ່າງ 20-30 ປີ, ມີສະຖານະພາບໂສດ, ມີລະດັບການສຶກສາລະດັບປະລິນຍາຕີ, ມີອາຊີບເປັນພະນັກງານເອກະຊົນ, ມີລາຍໄດ້ສະເລ່ຍຕໍ່ເດືອນແມ່ນ 1001-5,000 $ ແລະ ເດີນທາງມາຈາກປະເທດອາເມລິກາ. ສຳລັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງສ່ວນໃຫຍ່ແມ່ນເດີນທາງມາຄັ້ງທຳອິດ, ຮູ້ຈັກຫໍພິພິທະພັນມາຈາກອິນເຕີເນັດ, ໃຊ້ເວລາໃນການທ່ຽວຊົມແມ່ນ 1 ຊົ່ວໂມງ, ຈຸດປະສົງທີ່ນັກທ່ອງທ່ຽວມາແມ່ນທ່ຽວຊົມທົ່ວໄປ ແລະ ມາທ່ຽວຊ່ວງເວລາ 8:00-11:30 ໂມງ, ສ່ວນຫຼາຍແມ່ນມາທ່ຽວໃນວັນຈັນ ແລະ ສ່ວນຫຼາຍແມ່ນມາກັບໝູ່ເພື່ອນ, ນັກທ່ອງທ່ຽວສ່ວນຫຼາຍແມ່ນປະທັບໃຈຫ້ອງຮັບແຂກຂອງເຈົ້າຊີວິດ, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນບໍ່ແນ່ໃຈທີ່ຈະກັບມາ, ສ່ວນນັກທ່ອງທ່ຽວຈະແນະນຳໃຫ້ຄົນອື່ນໆມາທ່ຽວຫໍພິພິທະພັນສ່ວນໃຫຍ່ແມ່ນບໍ່ແນ່ໃຈທີ່ຈະແນະນຳ. ຜົນການສຶກສາການທົດສອບຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ພົບວ່າ: ປັດໄຈສ່ວນບຸກຄົນດ້ານເພດ, ດ້ານອາຍຸ, ດ້ານສະຖານະພາບ, ດ້ານລະດັບການສຶກສາ, ດ້ານອາຊີບ ແລະ ດ້ານລາຍໄດ້ສະເລ່ຍຕໍ່ເດືອນຂອງນັກທ່ອງທ່ຽວຕ່າງປະເທດ ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມຫໍພິພິທະພັນ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ, ການແນະນຳ-ບອກຕໍ່ຄົນອື່ນ , ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ,ຊ່ວງເວລາໃນການທ່ຽວຊົມ ແລະ ການມາທ່ຽວຊ້ຳຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

**ຄຳສັບສຳຄັນ:** *ພຶດຕິກຳນັກທ່ອງທ່ຽວ, ນັກທ່ອງທ່ຽວຕ່າງປະເທດ, ຄວາມສຳພັນ, ພິພິທະພັນ.*

# The Correlation Between Personal Factors of International Tourists and Tourists Behavior Who Visited Luangprabang National Museum

**Sangthong SIFONGXAY*, Champa LATTANASOUVANNAPHON, Orlathai SISAVANH, Khanthaly MIXAYKONE, Somkith SOULIYASACK, Dalounny INDAVONG, Chansamone SENGDALA**

*Department of Tourism Management, Faculty of Economics and Tourism, Souphanouvong University, Lao PDR*

***Correspondence:***
*Sangthong SIFONGXAY, Tourism Management Department, Faculty of Economic and Tourism, Souphanouvong University, Tel: 020 22131326, Email: st_sifongxay@hotmail.com*

***Article Info:***
*Submitted: Aug 11, 2021*
*Revised: Oct 29, 2021*
*Accepted: Nov 04, 2021*

**Abstract**

The objectives of this study were to: 1) study international tourists' behavior who visited the Luangprabang National Museum; and 2) analyze the relationships between the personal factors of international tourists and tourism behavior at the Luangprabang National Museum. Data was collected through a set of questionnaires that were distributed among 385 international tourists who visited the Luangprabang National Museum. The obtained data was then analyzed by using the Statistical Package of the Social Sciences Program. According to descriptive statistics, the data analysis tools used were percentage, mean, standard deviation, inferential statistics, and chi-square for hypothesis testing.

Research results revealed that the majority of international tourists were male with an average age ranging from 20-30 years old and they were single. The level of education was bachelor degrees and most of them were employees of private companies with an average monthly income between $1000-$5,000 and the USA. The analysis of the behavior of international tourists at Luangprabang National Museum found that most international tourists visited the museum for the first time, they received information about the museum from the internet, they spent an hour there, their trip was for general leisure, the time of their visit was around 8:00-11:30 am, and they mainly visited the museum on Mondays. They visited it with their friends, and most international tourists were impressed by the king’s reception room. They were unsure about coming back again in the future and unsure about telling other tourists about Luangprabang National Museum. In addition, the result of hypothesis testing indicated that personal factors such as gender, age, status, education, occupation and monthly income correlated with international tourists’ behavior in terms of the amount of time to visit, the purpose of the visit, the duration of visit, the date of visiting, travel companions, telling others, the receiving of information, the time periods of the visit and repeated visits were significant at 0.05 level.

**Keywords:** *Tourist Behavior, International Tourists, Correlation, Museum*

## 1. ພາກສະເໜີ (Introduction)

ຫຼວງພະບາງ ເປັນແຂວງໜຶ່ງທີ່ມີຄວາມໂດດເດັ່ນ ແລະ ດຶງດູດນັກທ່ອງທ່ຽວໃຫ້ເດີນທາງເຂົ້າມາທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ, ບໍ່ວ່າຈະເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເຊັ່ນ: ນໍ້າຕົກຕາດກວາງຊີ, ນໍ້າຕົກຕາດແສ້, ຖໍ້າຕິ່ງ, ຫໍພິພິຕະພັນແຫ່ງຊາດຫຼວງພະບາງ, ວັດຊຽງທອງ, ພະທາດພູສີ ແລະ ອື່ນໆ. ຍ້ອນ ຫຼວງພະບາງ ມີວັດທະນະທຳທີ່ເກົ່າແກ່ອັນດີງາມ, ມີຄວາມດັ້ງເດີມທາງດ້ານວັດທະນະທຳ, ມີຮີດຄອງປະເພນີທີ່ຍັງຮັກສາຄວາມເປັນເອກະລັກຂອງລາວ, ມີປະຫວັດສາດອັນເກົ່າແກ່ຍາວນານ ແລະ ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ, ສະນັ້ນໃນວັນທີ 9 ທັນວາ 1995 ຫຼວງພະບາງ ຈຶ່ງໄດ້ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກໂລກໂດຍອົງການ UNESCO (United Nations Educational, Scientific and cultural Organization) ໃຫ້ເປັນເມືອງມໍລະດົກໂລກ ຈຶ່ງເຮັດໃຫ້ ຫຼວງພະບາງ ກາຍເປັນທີ່ຮູ້ຈັກໃນເອທີສາກົນ ແລະ ເຮັດໃຫ້ນັກທ່ອງທ່ຽວຫຼັ່ງໄຫຼເຂົ້າມາທ່ຽວຊົມເປັນຈຳນວນຫຼາຍ. ແຂວງ ຫຼວງພະບາງ ເປັນເມືອງທີ່ມີຊື່ສຽງທາງການທ່ອງທ່ຽວ ແລະ ເປັນເມືອງຍອດນິຍົມທາງການທ່ອງທ່ຽວຕິດຕໍ່ກັນຫຼາຍປີ ພາຍຫຼັງທີ່ໄດ້ເຂົ້າເປັນມໍລະດົກໂລກ ໃນປີ 1995 ເນື່ອງມາຈາກ ເມືອງຫຼວງພະບາງ ມີລັກສະນະເປັນສູນກາງຂອງວັດທະນະທຳຕັ້ງແຕ່ອາດີດຈົນເຖິງປະຈຸບັນ, ເມືອງຫຼວງພະບາງ ມີທີ່ຕັ້ງທີ່ໂດດເດັ່ນການວາງແຜນໂຄງລ່າງເປັນເອກະລັກ ແລະ ການຮັກສາສະຖາປັດຕະຍະກຳແບບດັ້ງເດີມສະພາບເມືອງບໍ່ມີການປ່ຽນແປງ ແລະ ເມືອງຫຼວງພະບາງ ໄດ້ກາຍເປັນເມືອງຍອດນິຍົມທີ່ໜ້າທ່ອງທ່ຽວທີ່ສຸດໃນໂລກ (https://wearetravelgirls.com/, Online). ເມືອງຫຼວງພະບາງ ໄດ້ກາຍເປັນເມືອງມໍລະດົກໂລກເຮັດໃຫ້ນັກທ່ອງທ່ຽວມີຈຳນວນເພີ່ມຂຶ້ນ ເຊິ່ງສາມາດວັດໄດ້ຈາກສະຖິຕິນັກທ່ອງທ່ຽວທີ່ມາທ່ອງທ່ຽວ ເມືອງຫຼວງພະບາງ ເລີ່ມແຕ່ປີ 2012 ມີນັກທ່ອງທ່ຽວທັງໝົດ 410,855 ຄົນ, ປີ 2013 ມີນັກທ່ອງທ່ຽວທັງໝົດ 467,965 ຄົນ, ປີ 2014 ມີນັກທ່ອງທ່ຽວທັງໝົດ 531,327 ຄົນ, ປີ 2015 ມີນັກທ່ອງທ່ຽວທັງໝົດ 607,584 ຄົນ, ປີ 2016 ມີນັກທ່ອງທ່ຽວທັງໝົດ 643,319 ຄົນ ເຫັນວ່າໃນແຕ່ລະປີມີຈຳນວນນັກທ່ອງທ່ຽວເພີ່ມຂຶ້ນ (ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ, 2016)

ຫໍພິພິທະພັນແຫ່ງຊາດຫຼວງພະບາງ (ພະລາຊະວັງເກົ່າ) ສ້າງຂຶ້ນໃນປີ ຄ.ສ 1904 ສຳເລັດໃນປີ ຄ.ສ 1909, ໃນຣາຊການຂອງເຈົ້າຊີວິດ ສີສະຫວ່າງວົງ, ການອອກແບບຂອງອາຄານນີ້ແມ່ນສະຖາປະນິກຄົນຝຣັ່ງຊື່: ລາວທອນ ແລະ ການອອກແບບອາຄານນີ້ມີລັກສະນະປະສົມປະສານລະຫວ່າງ ສິລະປະລາວ ແລະ ຝຣັ່ງ ໂດຍແມ່ນລັດຖະບານຝຣັ່ງສ້າງຖວາຍໃຫ້ເປັນຂອງຂວັນແກ່ ເຈົ້າຊີວິດ ແຫ່ງຣາຊອານາຈັກລາວລ້ານຊ້າງ, ໃນຣາຊການຂອງເຈົ້າຊີວິດ ສີສະຫວ່າງວົງ ເພື່ອນຳໃຊ້ເຂົ້າເປັນບ່ອນປະທັບ (ທີ່ຢູ່ອາໄສ ແລະ ບ່ອນເຮັດວຽກ) ມາເຖິງປີ ຄ.ສ 1930 ຈຶ່ງໄດ້ປັບປຸງດັດແປງຍອດຜາສາດຄືນໃໝ່ ໃຫ້ເປັນແບບສິລະປະວັດທະນະທຳຫຼວງພະບາງ. ພາຍຫຼັງປະເທດຊາດໄດ້ຮັບການສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ເຈົ້າສີສະຫວ່າງ ວັດທະນາ ຈຶ່ງໄດ້ສະຫຼະບັນລັງ ມອບພະລາຊະວັງຫຼັງນີ້ໃຫ້ແກ່ ລັດຖະບານລາວ. ສະນັ້ນ, ພັກ ແລະ ລັດຖະບານຈຶ່ງໄດ້ປັບປຸງປ່ຽນແປງພະລາຊະວັງແຫ່ງນີ້ມາເປັນ ຫໍພິພິທະພັນແຫ່ງຊາດ ແຕ່ວັນທີ 13 ມີນາ 1976 ເປັນຕົ້ນມາຈົນເຖິງປະຈຸບັນ. ຫໍພິພິທະພັນໄດ້ກາຍເປັນສະຖານທີ່ທ່ອງທ່ຽວທາງສະຖາປັດຕະຍະກຳທີ່ສວຍງາມ ສາມາດດຶງດູດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຊົມຢ່າງຫຼວງຫຼາຍ, ເປັນສະຖານທີ່ຕັ້ງຢູ່ໃຈກາງເມືອງ, ຖະໜົນສີສະຫວ່າງວົງ, ກົງກັນຂ້າມກັບພະທາດຈອມພູສີ, ຕິດກັບຕະຫຼາດມືດ ແລະ ແມ່ນໍ້າຂອງ, ສະນັ້ນນັກທ່ອງທ່ຽວຈຶ່ງສາມາດເຂົ້າເຖິງງ່າຍ, ທາງດ້ານໃນຂອງຫໍພິພິທະພັນຍັງມີໂຮງຟ້ອນພະລັກພະລາມທີ່ສະແດງເຖິງວັດທະນະທຳລາວທີ່ສືບທອດມາແຕ່ດົນນານ ແລະ ຍັງຄົງຮັກສາໄວ້ເຖິງປະຈຸບັນນີ້. ນອກຈາກນີ້ທາງດ້ານໃນຍັງວາງສະແດງວັດຖຸບູຮານເຊິ່ງເປັນເຄື່ອງໃຊ້ສອຍໃນສະໄໝເຈົ້າຊີວິດຫຼາຍອົງຈຶ່ງມີການວາງສະແດງໃຫ້ຄົນຮຸ່ນຫຼັງໄດ້ຮູ້ຈັກການປົກຄອງໃນສະໄໝກ່ອນ ເຊິ່ງປະຈຸບັນນີ້ເຄື່ອງໃຊ້ສອຍດັ່ງກ່າວໄດ້ກາຍເປັນມໍລະດົກອັນລໍ້າຄ່າຂອງຊາດ. ສະນັ້ນ, ຈຶ່ງເຮັດໃຫ້ນັກທ່ອງທ່ຽວໃຫ້ຄວາມສົນໃຈ

ແລະ ຢາກເຂົ້າມາທ່ຽວຊົມຫໍພິພິຕະພັນ. ຫໍພິພິທະພັນແຫ່ງຊາດຫຼວງພະບາງ ແມ່ນສະຖານທີ່ທ່ອງທ່ຽວທີ່ເປັນມໍລະດົກອັນສະທ້ອນໃຫ້ເຫັນເຖິງຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະນະທຳ ເຊິ່ງສະແດງອອກໃນສີລະປະການຕົກແຕ່ງພາຍໃນທີ່ມີຄວາມປານີດສື່ໃຫ້ເຫັນວັດທະນະທຳຮີດຄອງປະເພນີອັນເກົ່າແກ່ທີ່ໂດດເດັ່ນຂອງຊາດລາວ ແລະ ເປັນຫໍພິພິທະພັນພຽງແຫ່ງດຽວທີ່ຍັງຄົງຫຼົງເຫຼືອຢູ່ໃນເມືອງຫຼວງພະບາງ ພ້ອມຍັງເປັນສະຖານທີ່ທ່ອງທ່ຽວທີ່ມີໄວ້ໃຫ້ບໍລິການໂດຍຕອບສະໜອງກັບຄວາມຕ້ອງການຂອງນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວຊົມ (ຈັນທະລີ ສີພາວັນ ແລະ ສີອຳໄພ ຈາຈອມແສງ, 2014: 2). ເຊິ່ງໃນແຕ່ລະປີມີນັກທ່ອງທ່ຽວເຂົ້າມາທ່ຽວຊົມເປັນຈຳນວນຫຼາຍທັງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ເຊິ່ງເຫັນໄດ້ຈາກສະຖິຕິນັກທ່ອງທ່ຽວທີ່ມາທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ເລີ່ມແຕ່ປີ 2013 ມີນັກທ່ອງທ່ຽວຕ່າງປະເທດທັງໝົດ 108,928 ຄົນ, ປີ 2014 ມີນັກທ່ອງທ່ຽວຕ່າງປະເທດທັງໝົດ 120,627 ຄົນ, ປີ 2015 ມີນັກທ່ອງທ່ຽວຕ່າງປະເທດທັງໝົດ 168,167 ຄົນ, ປີ 2016 ມີນັກທ່ອງທ່ຽວຕ່າງປະເທດທັງໝົດ 168,150 ຄົນ, ປີ 2017 ມີນັກທ່ອງທ່ຽວຕ່າງປະເທດທັງໝົດ 189,340 ຄົນ (ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ, 2017).

ດັ່ງນັ້ນ, ທີມງານຄົ້ນວ້າວິໄຈຈຶ່ງສົນໃຈ ແລະ ໄດ້ກຳນົດຈຸດປະສົງໃນການສຶກສາ 2 ຈຸດປະສົງໄດ້ແກ່: 1) ສຶກສາພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ແລະ 2) ວິເຄາະຄວາມສຳພັນລະຫວ່າງປັດໃຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິດທະພັນແຫ່ງຊາດຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ໃນການຄົ້ນຄວ້າວິໄຈຄັ້ງນີ້ແມ່ນນຳໃຊ້ການສຶກສາຄົ້ນຄວ້າແບບປະລິມານໂດຍໃຊ້ແບບສອບຖາມປະກອບໃນການເກັບກຳຂໍ້ມູນພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ແລ້ວນຳມາວິເຄາະ, ຈັດລຽງຂໍ້ມູນທີ່ໄດ້ມາຕາມລຳດັບ ເພື່ອຊອກຫາຄ່າຄວາມ=ຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ແລະ ທົດສອບຄ່າ ໄຄວສະແຄຣ໌ (Chi-square) ໂດຍນຳໃຊ້ໂປູແກມສຳເລັດຮູບໃນການວິເຄາະຂໍ້ມູນທາງສັງຄົມສາດ. ປະຊາກອນທີ່ໃຊ້ເຂົ້າໃນການຄົ້ນຄວ້າວິໄຈຄັ້ງນີ້ແມ່ນນັກທ່ອງທ່ຽວຕ່າງປະເທດທີ່ເດີນທາງເຂົ້າມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນປີ 2018. ສ່ວນການສຸ່ມກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ແມ່ນເລືອກໃຊ້ວິທີການສຸ່ມຕົວຢ່າງແບບບໍ່ອາໄສຫລັກຄວາມຫນ້າຈະເປັນຕາມໂອກາດທາງສະຖິຕິ ໂດຍໃຊ້ເທັກນິກການສຸ່ມແບບຕາມຄວາມສະດວກ ຫຼື ແບບບັງເອີນ ແລະ ໃຊ້ສູດໃນການຄຳນວນໄດ້ກຸ່ມຕົວຢ່າງຈຳນວນ 385 ຄົນ.

ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄວ້າການຄົ້ນຄວ້າວິໄຈຄັ້ງນີ້ໃຊ້ແບບສອບຖາມໃນການເກັບລວບລວມຂໍ້ມູນ. ພາຍຫຼັງທີ່ໄດ້ຂໍ້ມູນມາຈາກແບບສອບຖາມມາແລ້ວທີມງານຜູ້ຄົ້ນຄວ້າໄດ້ນຳເອົາບັນດາຂໍ້ມູນດັ່ງກ່າວມາດຳເນີນການວິເຄາະຕາມຈຸດປະສົງເຊິ່ງທີມງານຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນດ້ວຍໂປູແກຣມ SPSS (Statistical Package for Social Sciences) ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ການວິເຄາະກ່ຽວກັບປັດໃຈສ່ວນບຸກຄົນຂອງນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ທີມງານຜູ້ຄົ້ນຄວ້າໄດ້ວິເຄາະໂດຍໃຊ້ສະຖິຕິພັນລະນາຄື: ຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage) ໄດ້ແກ່ຂໍ້ມູນເພດ, ອາຍຸ, ສະຖານະພາບ, ລະດັບການສຶກສາ, ອາຊີບ ແລະ ລາຍໄດ້ ໂດຍນຳສະເໜີແບບຕາຕະລາງ.

2. ການວິເຄາະກ່ຽວກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ, ເຊິ່ງປະກອບມີ: ຈຳນວນຄັ້ງທີ່ມາທ່ຽວ, ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ວັດຖຸປະສົງໃນການເດີນທາງທ່ຽວຊົມ, ຊ່ວງເວລາໃນການທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ, ສິ່ງທີ່ປະທັບໃຈ, ການມາທ່ຽວຊ້ຳ ແລະ ການແນະນຳ-ບອກຕໍ່ຄົນອື່ນ. ເຊິ່ງທີມງານຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນໂດຍໃຊ້ສະຖິຕິພັນລະນາ (Descriptive Statistics) ຄື: ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation) ໂດຍນຳສະເໜີແບບຕາຕະລາງ.

3. ສ່ວນການວິເຄາະຄວາມສຳພັນລະຫວ່າງປັດໃຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ. ທີມງານຜູ້ຄົ້ນຄວ້າ

ໄດ້ວິເຄາະຂໍ້ມູນໂດຍໃຊ້ສະຖິຕິອ້າງອີງ (Inferential Statistics) ຄື: ການທົດສອບຄ່າ ໄຄວສະແຄຣ໌ (Chi-square) ໂດຍນໍາສະເໜີແບບຕາຕະລາງ.

## 3. ຜົນໄດ້ຮັບ

### 3.1 ພຶດຕິກໍານັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ

ຜົນການຄົ້ນຄວ້າວິໄຈພົບວ່າ ນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ສ່ວນຫຼາຍແມ່ນເປັນເພດຊາຍ ຈໍານວນ 198 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 51.40%, ມີອາຍຸລະຫວ່າງ 20-30 ປີ ຈໍານວນ 138 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 35.80%, ມີສະຖານະພາບໂສດ ມີຈໍານວນ 174 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 45.20%, ມີລະດັບການສຶກສາປະລິນຍາຕີ ຈໍານວນ 246 ຄົນ , ຄິດເປັນສ່ວນຮ້ອຍເທົ່າກັບ 63.90%, ມີອາຊີບເປັນພະນັກງານເອກະຊົນມີຈໍານວນ 122 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 31.70%, ມີລາຍໄດ້ສະເລ່ຍຕໍ່ເດືອນແມ່ນ 1001-5,000$ ຈໍານວນ 167 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 43.40% ແລະ ເດີນທາງມາຈາກປະເທດອາເມລິກາ ມີຈໍານວນ 65 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 16.90%. ຜົນການສຶກສາກ່ຽວກັບພຶດຕິກໍານັກທ່ອງທ່ຽວພົບວ່າ: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ພຶດຕິກໍາສ່ວນໃຫຍ່ແມ່ນເດີນທາງມາຄັ້ງທໍາອິດ ຈໍານວນ 220 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 57.10%, ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານກ່ຽວກັບຫໍພິພິທະພັນມາຈາກສື່ອິນເຕີເນັດ ຈໍານວນ 142 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 36.90%, ໄລຍະເວລາທີ່ໃຊ້ເວລາໃນການທ່ຽວຊົມຫໍພິພິທະພັນແມ່ນ 1 ຊົ່ວໂມງ ຈໍານວນ 186 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 48.30%, ຈຸດປະສົງທີ່ນັກທ່ອງທ່ຽວມາທ່ຽວຊົມຫໍພິພິທະພັນແມ່ນເພື່ອທ່ຽວຊົມທົ່ວໄປ ຈໍານວນ 187 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 48.60%, ແລະ ມາທ່ຽວຊ່ວງເວລາ 8:00-11:30 ໂມງ ຈໍານວນ 256 ຄົນ ຄິດເປັນສ່ວນຮ້ອຍເທົ່າກັບ 66.50%, ສ່ວນຫຼາຍແມ່ນມາທ່ຽວໃນວັນຈັນ ຈໍານວນ 69 ຄົນ ຄິດເປັນສ່ວນຮ້ອຍເທົ່າກັບ 17.90% ແລະ ມາກັບໝູ່ເພື່ອນ ຈໍານວນ 149 ຄົນ ຄິດເປັນສ່ວນຮ້ອຍເທົ່າກັບ 38.40%, ນັກທ່ອງທ່ຽວສ່ວນຫຼາຍແມ່ນປະທັບໃຈຫ້ອງຮັບແຂກຂອງເຈົ້າຊີວິດ ຈໍານວນ 181 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 12.90%, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນບໍ່ແນ່ໃຈທີ່ຈະກັບມາທ່ອງທ່ຽວຊໍ້າ ຈໍານວນ 188 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 48.80% ແລະ ນັກທ່ອງທ່ຽວບໍ່ແນ່ໃຈວ່າຈະແນະນໍາໃຫ້ນັກທ່ອງທ່ຽວຄົນອື່ນໆມາທ່ຽວຊົມຫໍພິພິທະພັນ ຈໍານວນ 200 ຄົນ, ຄິດເປັນສ່ວນຮ້ອຍເທົ່າກັບ 51.90%.

### 3.2 ວິເຄາະຄວາມສໍາພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກໍານັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານເພດຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສໍາພັນກັບພຶດຕິກໍາການທ່ອງທ່ຽວ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈໍານວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ ໂດຍມີຄ່າ $\chi^2 = 11.252$, ມີຄ່າ P-value = 0.047 ແລະ ມີຄວາມສໍາພັນກັບດ້ານຈຸດປະສົງໃນການເດີນທາງທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ໂດຍມີຄ່າ $\chi^2 = 10.507$ ແລະ ມີຄ່າ P-value = 0.015 ດ້ວຍຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງ. ໃນນັ້ນ ປັດໄຈສ່ວນບຸກຄົນດ້ານເພດຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສໍາພັນກັບພຶດຕິກໍາການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2 = 6.162$ ມີຄ່າ P-value = 0.104, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2 = 6.828$ ແລະ ມີຄ່າ P-value = 0.145, ດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2 = 1.332$ ແລະ ມີຄ່າ P-value = 0.248, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2 = 2.970$ ແລະ ມີຄ່າ P-value = 0.813, ດ້ານຜູ້ຮ່ວມເດີນທາງ ໂດຍມີຄ່າ $\chi^2 = 9.787$ ແລະ ມີຄ່າ P-value = 0.082, ດ້ານການມາທ່ຽວຊໍ້າ ໂດຍມີຄ່າ $\chi^2 = 4.056$ ແລະ ມີຄ່າ P-value = 0.132 ແລະ ດ້ານການແນະນໍາ-ບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2 = 1.753$ ແລະ ມີຄ່າ P-value = 0.146 ດ້ວຍຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງ

ບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງ. (ຕາຕະລາງທີ 1)

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານອາຍຸຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ ໂດຍມີຄ່າ $\chi^2$ = 91.381 ແລະ ມີຄ່າ P-value = 0.000, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 85.416 ແລະ ມີຄ່າ P-value = 0.000, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ ໂດຍມີຄ່າ $\chi^2$ = 43.043 ແລະ ມີຄ່າ P-value = 0.000, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2$ = 62.536 ແລະ ມີຄ່າ p-value = 0.000, ດ້ານຜູ້ຮ່ວມເດີນທາງ ໂດຍມີຄ່າ $\chi^2$ = 96.442 ແລະ ມີຄ່າ P-value = 0.000, ດ້ານການມາທ່ຽວຊ້ຳ ໂດຍມີຄ່າ $\chi^2$ = 32.659 ແລະ ມີຄ່າ p-value = 0.000 ແລະ ດ້ານການແນະນຳ-ບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2$ = 39.147 ແລະ ມີຄ່າ P-value = 0.000 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໃນນັ້ນປັດໄຈສ່ວນບຸກຄົນດ້ານອາຍຸຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວໃນດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2$ ເທົ່າກັບ =7.916 ແລະ ມີຄ່າ P-value = 0.927 ແລະ ດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 7.245 ແລະ ມີຄ່າ P-value = 0.203 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. (ຕາຕະລາງທີ 2)

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານສະຖານະພາບຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ ໂດຍມີຄ່າ $\chi^2$ = 48.606 ແລະ ມີຄ່າ P-value = 0.000, ດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2$ = 17.693 ແລະ ມີຄ່າ P-value = 0.039, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 44.692 ແລະ ມີຄ່າ P-value = 0.000, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ ໂດຍມີຄ່າ $\chi^2$ = 19.194 ແລະ ມີຄ່າ P-value = 0.024, ດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 10.350 ແລະ ມີຄ່າ P-value = 0.016, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2$ = 47.504 ແລະ ມີຄ່າ P-value = 0.000, ດ້ານຜູ້ຮ່ວມເດີນທາງ ໂດຍມີຄ່າ $\chi^2$ = 59.236 ແລະ ມີຄ່າ P-value = 0.000 ແລະ ດ້ານການແນະນຳບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2$ = 15.602 ແລະ ມີຄ່າ P-value = 0.016 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໃນນັ້ນປັດໄຈສ່ວນບຸກຄົນດ້ານສະຖານະພາບຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວໃນດ້ານການມາທ່ຽວຊ້ຳ ໂດຍມີຄ່າ $\chi^2$ = 10.204 ແລະ ມີຄ່າ P-value = 0.116 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. (ຕາຕະລາງທີ 3)

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານລະດັບການສຶກສາຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 37.517 ແລະ ມີຄ່າ P-value = 0.002, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ ໂດຍມີຄ່າ $\chi^2$ = 44.767 ແລະ ມີຄ່າ P-value = 0.000, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2$ = 48.854 ແລະ ມີຄ່າ P-value = 0.002, ດ້ານຜູ້ຮ່ວມເດີນທາງໂດຍມີຄ່າ $\chi^2$ = 70.400 ແລະ ມີຄ່າ P-value = 0.000 ແລະ ດ້ານການມາທ່ຽວຊ້ຳ ໂດຍມີຄ່າ $\chi^2$ = 19.036 ແລະ ມີຄ່າ P-value = 0.015 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໃນນັ້ນປັດໄຈສ່ວນບຸກຄົນດ້ານລະດັບການສຶກສາຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ ໂດຍມີຄ່າ $\chi^2$ = 29.979 ແລະ ມີຄ່າ P-value = 0.070, ດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2$ = 18.625 ແລະ ມີຄ່າ P-value = 0.098, ດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 2.631

ແລະ ມີຄ່າ P-value = 0.621 ແລະ ດ້ານການແນະນຳ-ບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2$= 9.101 ແລະ ມີຄ່າ P-value = 0.334 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. (ຕາຕະລາງທີ 4)

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານອາຊີບຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ ໂດຍມີຄ່າ $\chi^2$ = 68.034 ແລະ ມີຄ່າ P-value = 0.015, ດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2$ = 44.518 ແລະ ມີຄ່າ P-value = 0.018, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 71.071 ແລະ ມີຄ່າ P-value = 0.000, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ ໂດຍມີຄ່າ $\chi^2$ = 66.150 ແລະ ມີຄ່າ P-value = 0.000, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2$ = 97.120 ແລະ ມີຄ່າ P-value = 0.000, ດ້ານຜູ້ຮ່ວມເດີນທາງ ໂດຍມີຄ່າ $\chi^2$ = 125.132 ແລະ ມີຄ່າ P-value = 0.000 ແລະ ດ້ານການມາທ່ຽວຊ້ຳ ໂດຍມີຄ່າ $\chi^2$ = 49.986 ແລະ ມີຄ່າ P-value = 0.000 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໃນນັ້ນປັດໄຈສ່ວນບຸກຄົນດ້ານອາຊີບຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວໃນດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 14.720 ແລະ ມີຄ່າ P-value = 0.099 ແລະ ດ້ານການແນະນຳ-ບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2$ = 23.342 ແລະ ມີຄ່າ P-value = 0.178 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. (ຕາຕະລາງທີ 5)

ຜົນການຄົ້ນຄວ້າວິໄຈພົບວ່າ ປັດໄຈສ່ວນບຸກຄົນດ້ານລາຍໄດ້ສະເລ່ຍຕໍ່ເດືອນຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ ໂດຍມີຄ່າ $\chi^2$ = 41.038 ແລະ ມີຄ່າ P-value = 0.000, ດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ ໂດຍມີຄ່າ $\chi^2$ = 31.440 ແລະ ມີຄ່າ P-value = 0.000, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 81.735 ແລະ ມີຄ່າ P-value = 0.000, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ ໂດຍມີຄ່າ $\chi^2$ = 48.276 ແລະ ມີຄ່າ P-value = 0.000, ດ້ານວັນທີເລືອກມາທ່ຽວຊົມ ໂດຍມີຄ່າ $\chi^2$ = 62.439 ແລະ ມີຄ່າ P-value = 0.000, ດ້ານຜູ້ຮ່ວມເດີນທາງ ໂດຍມີຄ່າ $\chi^2$ = 109.610 ແລະ ມີຄ່າ P-value = 0.000, ດ້ານການມາທ່ຽວຊ້ຳ ໂດຍມີຄ່າ $\chi^2$ = 30.283 ແລະ ມີຄ່າ P-value ເທົ່າກັບ 0.000 ແລະ ດ້ານການແນະນຳບອກຕໍ່ຄົນອື່ນ ໂດຍມີຄ່າ $\chi^2$ = 17.001 ແລະ ມີຄ່າ P-value = 0.009 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໃນນັ້ນປັດໄຈສ່ວນບຸກຄົນດ້ານລາຍໄດ້ສະເລ່ຍຕໍ່ເດືອນຂອງນັກທ່ອງທ່ຽວຕ່າງປະເທດບໍ່ມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວໃນດ້ານຊ່ວງເວລາໃນການທ່ຽວຊົມ ໂດຍມີຄ່າ $\chi^2$ = 0.818 ແລະ ມີຄ່າ P-value = 0.845 ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. (ຕາຕະລາງທີ 6)

## 4. ວິພາກຜົນ

ຜົນການຄົ້ນຄວ້າວິໄຈກ່ຽວກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ພົບວ່າ ພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ສ່ວນໃຫຍ່ແມ່ນເດີນທາງມາຄັ້ງທຳອິດ, ຮູ້ຈັກຫໍພິພິທະພັນມາຈາກອິນເຕີເນັດ, ໃຊ້ເວລາໃນການທ່ຽວຊົມແມ່ນ 1 ຊົ່ວໂມງ, ຈຸດປະສົງທີ່ນັກທ່ອງທ່ຽວມາແມ່ນທ່ຽວຊົມທົ່ວໄປ ແລະ ມາທ່ຽວຊ່ວງເວລາ 8:00-11:30 ໂມງ, ສ່ວນຫຼາຍແມ່ນມາທ່ຽວໃນວັນຈັນ ແລະ ສ່ວນຫຼາຍແມ່ນມາກັບໝູ່ເພື່ອນ, ນັກທ່ອງທ່ຽວສ່ວນຫຼາຍແມ່ນປະທັບໃຈຫ້ອງຮັບແຂກຂອງເຈົ້າຊີວິດ, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນບໍ່ແນ່ໃຈທີ່ຈະກັບມາ ແລະ ນັກທ່ອງທ່ຽວບໍ່ແນ່ໃຈວ່າຈະແນະນຳໃຫ້ນັກທ່ອງທ່ຽວຄົນອື່ນໆມາທ່ຽວຊົມຫໍພິພິທະພັນ ເຊິ່ງສອດຄ່ອງກັບງານວິໄຈຂອງ ສິຣິເພັນ ຢ່ຽມຈັນຍາ (2555: 206-207) ທີ່ສຶກສາກ່ຽວກັບພຶດຕິກຳ ແລະ

ການຕັດສິນໃຈເຂົ້າທ່ຽວຊົມພິພິທະພັນຕຳນັກສາຍສຸດທານະພະດີນໃນວັງສວນສຸນັນທາຂອງນັກທ່ອງທ່ຽວຊາວໄທ ແລະ ປັດໄຈສ່ວນປະສົມທາງການຕະຫລາດທີ່ມີອິດທິພົນຕໍ່ການຕັດສິນໃຈ ພົບວ່າ ສ່ວນໃຫຍ່ທ່ຽວປີລະຄັ້ງ, ຊ່ອງທາງການຫາຂໍ້ມູນໃນການທ່ຽວພິພິທະພັນຈາກເວັບໄຊທ໌, ຈຸດປະສົງທີ່ມາທ່ຽວແມ່ນເພື່ອທັດສະນະສຶກສາ ແລະ ບໍ່ຮູ້ຈັກພິພິທະພັນຕຳນັກສຸດທານະພະດີນມາກ່ອນ ແລະ ສອດຄ້ອງກັບງານວິໄຈຂອງ ກູນທິກາ ວິບູນປິ່ນ (2560: 99-100) ທີ່ສຶກສາກ່ຽວກັບພຶດຕິກຳ ແລະ ທັດສະນະຂອງນັກທ່ອງທ່ຽວທີ່ມີຕໍ່ການຈັດບໍລິການໃນແຫລ່ງທ່ອງທ່ຽວທີ່ມີບົດຮຽນຈາກຄວາມສູນເສຍອຸບັດຕິໄພ ແລະ ມໍລະນະໄພ ພົບວ່າ ຈຸດປະສົງທີ່ມາທ່ຽວແມ່ນເພື່ອຫາຄວາມຮູ້ກ່ຽວກັບໂລກໄພໄຂເຈັບ ແລະ ສົນໃຈທ່ຽວຊົມສິ່ງສະແດງທາງການແພດ, ແຫລ່ງຂໍ້ມູນໃນການມາທ່ອງທ່ຽວແມ່ນມາຈາກສື່ໂຄສະນາທົ່ວໄປເຊັ່ນ: ເຟສບຸກ, ໜັງສືພິມ, ວາລະສານ ແລະ ແຜ່ນພັບ. ລັກສະນະການມາທ່ອງທ່ຽວແມ່ນມາແບບເປັນກຸ່ມຫມູ່ເພື່ອນ/ຄອບຄົວ, ພາຫະນະທີ່ໃຊ້ໃນການເດີນທາງມາທ່ອງທ່ຽວແມ່ນລົດໂດຍສານສາທາລະນະ ສ່ວນວ່າການກັບມາທ່ຽວຊົມອີກຄັ້ງແມ່ນມາຄັ້ງດຽວກໍ່ພຽງພໍແລ້ວ.

ຜົນການທົດສອບຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ພົບວ່າ ປັດໄຈສ່ວນບຸກຄົນດ້ານເພດຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ ແລະ ຈຸດປະສົງໃນການເດີນທາງທ່ຽວຊົມຫໍພິພິທະພັນ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ປັດໄຈສ່ວນບຸກຄົນດ້ານອາຍຸຂອງນັກທ່ອງທ່ຽວຕ່າງປະເທດ ມີຄວາມສຳພັນກັບ ພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ, ການມາທ່ຽວຊ້ຳ ແລະ ການແນະນຳ-ບອກຕໍ່ຄົນອື່ນ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ປັດໄຈສ່ວນບຸກຄົນດ້ານສະຖານະພາບຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບ ພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ, ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມ, ຊ່ວງເວລາໃນການທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ ແລະ ການແນະນຳບອກຕໍ່ຄົນອື່ນ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ປັດໄຈສ່ວນບຸກຄົນດ້ານລະດັບການສຶກສາຂອງນັກທ່ອງທ່ຽວຕ່າງປະເທດ ມີຄວາມສຳພັນກັບ ພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ ແລະ ການມາທ່ຽວຊ້ຳ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ປັດໄຈສ່ວນບຸກຄົນດ້ານອາຊີບຂອງນັກທ່ອງທ່ຽວຕ່າງປະເທດ ມີຄວາມສຳພັນກັບ ພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ, ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ ແລະ ການມາທ່ຽວຊ້ຳ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ປັດໄຈສ່ວນບຸກຄົນດ້ານລາຍໄດ້ສະເລ່ຍຕໍ່ເດືອນຂອງນັກທ່ອງທ່ຽວຕ່າງປະເທດ ມີຄວາມສຳພັນກັບ ພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມ, ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ, ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ຈຸດປະສົງໃນການເດີນທາງທ່ຽວຊົມ, ວັນທີເລືອກມາທ່ຽວຊົມ, ຜູ້ຮ່ວມເດີນທາງ, ການມາທ່ຽວຊ້ຳ ແລະ ການແນະນຳ-ບອກຕໍ່ຄົນອື່ນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສອດຄ້ອງກັບງານວິໄຈຂອງ ສິຣິວັນ ປິຕິວັນ (2551) ທີ່ສຶກສາກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ພຶດຕິກຳການທ່ອງທ່ຽວຂອງນັກທ່ອງທ່ຽວຊາວໄທ ພົບວ່າ ນັກກທ່ອງທ່ຽວທີ່ມີເພດແຕກຕ່າງກັນມີຜົນຕໍ່ພຶດຕິກຳການທ່ອງທ່ຽວດ້ານຄວາມຖີ່ໃນການເດີນທາງມາທ່ອງທ່ຽວແຕກຕ່າງກັນ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ

0.05, ນັກທ່ອງທ່ຽວທີ່ມີອາຍຸແຕກຕ່າງກັນມີຜົນຕໍ່ພຶດຕິກຳການທ່ອງທ່ຽວດ້ານຄ່າໃຊ້ຈ່າຍໂດຍລວມໃນການເດີນທາງມາທ່ອງທ່ຽວ ແລະ ດ້ານຈຳນວນບຸກຄົນທີ່ມາທ່ອງທ່ຽວແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ນັກທ່ອງທ່ຽວທີ່ມີພູມລຳເນົາແຕກຕ່າງກັນມີຜົນຕໍ່ພຶດຕິກຳການທ່ອງທ່ຽວດ້ານຄວາມຖີ່ໃນການເດີນທາງມາທ່ອງທ່ຽວ, ດ້ານຈຳນວນບຸກຄົນທີ່ມາທ່ອງທ່ຽວ ແລະ ດ້ານແນວໂນ້ມການກັບມາທ່ອງທ່ຽວໃນອະນາຄົດແຕກຕ່າງກັນ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສອດຄ່ອງກັບງານວິໄຈຂອງ ທິບພະວັນ ແພດຣັກ (2549) ທີ່ໄດ້ສຶກສາກ່ຽວກັບການປຽບທຽບພຶດຕິກຳ ແລະ ແນວໂນ້ມພຶດຕິກຳການທ່ອງທ່ຽວບູຮານສະຖານຂອງນັກທ່ອງທ່ຽວຊາວໄທ ແລະ ຕ່າງປະເທດທີ່ອຸທິຍານປະຫວັດສາດພະນະຄອນສີອະຍຸດທະຍາ ພົບວ່າ ຂໍ້ມູນສ່ວນບຸກຄົນຂອງນັກທ່ອງທ່ຽວຊາວໄທດ້ານອາຍຸມີຄວາມສຳພັນກັບໄລຍະເວລາໃນການທ່ອງທ່ຽວ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ຂໍ້ມູນສ່ວນບຸກຄົນຂອງນັກທ່ອງທ່ຽວຊາວໄທດ້ານສະຖານະພາບມີຄວາມສຳພັນກັບແນວໂນ້ມພຶດຕິກຳການທ່ອງທ່ຽວໃນອະນາຄົດ ແລະ ການບອກຕໍ່ບຸກຄົນອື່ນໆໃຫ້ມາທ່ອງທ່ຽວ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01. ສ່ວນວ່າຂໍ້ມູນສ່ວນບຸກຄົນຂອງນັກທ່ອງທ່ຽວຕ່າງປະເທດດ້ານເພດມີຄວາມສຳພັນກັບແນວໂນ້ມພຶດຕິກຳການທ່ອງທ່ຽວໃນອະນາຄົດ ແລະ ການບອກຕໍ່ບຸກຄົນອື່ນໆໃຫ້ມາທ່ອງທ່ຽວ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05, ໃນນັ້ນຂໍ້ມູນສ່ວນບຸກຄົນຂອງນັກທ່ອງທ່ຽວຕ່າງປະເທດດ້ານພູມລຳເນົາມີຄວາມສຳພັນກັບໄລຍະເວລາໃນການທ່ອງທ່ຽວ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສອດຄ່ອງກັບງານວິໄຈຂອງ ອຳມະຣັດ ວົງເປັງ (2550) ທີ່ໄດ້ສຶກສາກ່ຽວກັບປັດໄຈທາງການຕະຫລາດທີ່ມີອິດທິພົນຕໍ່ການຕັດສິນໃຈທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບ ພົບວ່າ ປັດໄຈປະຊາກອນສາດດ້ານເພດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບໃນດ້ານຈຸດປະສົງຫລັກຂອງການເດີນທາງ, ດ້ານບຸກຄົນຮ່ວມເດີນທາງ ແລະ ກິດຈະກຳທີ່ນັກທ່ອງທ່ຽວມັກ. ປັດໄຈປະຊາກອນສາດດ້ານອາຍຸມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບໃນໃນທຸກດ້ານ ຍົກເວັ້ນດ້ານລັກສະນການເດີນທາງທີ່ບໍ່ມີຄວາມສຳພັນ. ປັດໄຈປະຊາກອນສາດດ້ານການສຶກສາມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບໃນດ້ານຈຳນວນຄັ້ງທີ່ເດີນທາງມາທ່ອງທ່ຽວ ແລະ ດ້ານຈຸດປະສົງຫຼັກຂອງການເດີນທາງ. ປັດໄຈປະຊາກອນສາດດ້ານອາຊີບມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບໃນດ້ານຈຳນວນຄັ້ງທີ່ເດີນທາງມາທ່ອງທ່ຽວ, ດ້ານຈຸດປະສົງຫລັກຂອງການເດີນທາງ, ແລະ ດ້ານບຸກຄົນຮ່ວມເດີນທາງ, ດ້ານປະເພດທີ່ພັກອາໄສ ແລະ ດ້ານຄ່າໃຊ້ຈ່າຍໃນການທ່ອງທ່ຽວຕໍ່ຄັ້ງ. ນອກຈາກນີ້ປັດໄຈປະຊາກອນສາດດ້ານຖິ່ນທີ່ຢູ່ອາໄສມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບໃນດ້ານການທ່ອງທ່ຽວຕາມລັກສະນະການເດີນທາງ ແລະ ດ້ານກິດຈະກຳທີ່ນັກທ່ອງທ່ຽວມັກ.

## 5. ສະຫຼຸບ

ນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ສ່ວນຫຼາຍແມ່ນເປັນເພດຊາຍ, ມີອາຍຸລະຫວ່າງ 20-30 ປີ, ມີອາຊີບເປັນພະນັກງານເອກະຊົນ, ມີລະດັບການສຶກສາລະດັບປະລິນຍາຕີ, ມີສະຖານະພາບໂສດ, ມີລາຍໄດ້ສະເລ່ຍຕໍ່ເດືອນແມ່ນ 1001-5,000 $, ເດີນທາງມາຈາກປະເທດອາເມລິກາ. ພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ ສ່ວນໃຫຍ່ແມ່ນເດີນທາງມາຄັ້ງທຳອິດ, ຮູ້ຈັກຫໍພິພິທະພັນມາຈາກອິນເຕີເນັດ, ໃຊ້ເວລາໃນການທ່ຽວຊົມແມ່ນ 1 ຊົ່ວໂມງ, ຈຸດປະສົງທີ່ນັກທ່ອງທ່ຽວມາແມ່ນທ່ຽວຊົມທົ່ວໄປ ແລະ ມາທ່ຽວຊ່ວງເວລາ 8:00-11:30 ໂມງ, ສ່ວນຫຼາຍແມ່ນມາທ່ຽວໃນວັນຈັນ ແລະ ສ່ວນຫຼາຍແມ່ນມາກັບໝູ່ເພື່ອນ, ນັກທ່ອງທ່ຽວສ່ວນຫຼາຍແມ່ນປະທັບໃຈຫ້ອງຮັບແຂກຂອງເຈົ້າຊີວິດ, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນບໍ່ແນ່ໃຈທີ່ຈະກັບມາ ແລະ ນັກທ່ອງທ່ຽວບໍ່ແນ່ໃຈວ່າຈະແນະນຳໃຫ້ນັກທ່ອງທ່ຽວຄົນອື່ນໆມາທ່ຽວຊົມຫໍພິພິທະພັນ.

ການທົດສອບຄວາມສຳພັນລະຫວ່າງປັດໄຈສ່ວນບຸກຄົນກັບພຶດຕິກຳນັກທ່ອງທ່ຽວຕ່າງປະເທດທີ່ມາທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງ ສາມາດສະຫຼຸບໄດ້ດັ່ງນີ້: ປັດໄຈສ່ວນບຸກຄົນດ້ານເພດ, ດ້ານອາຍຸ, ດ້ານສະຖານະພາບ, ດ້ານລະດັບການສຶກສາ, ດ້ານອາຊີບ ແລະ ດ້ານລາຍໄດ້ສະເລ່ຍຕໍ່ເດືອນຂອງນັກທ່ອງທ່ຽວຕ່າງປະເທດມີຄວາມສຳພັນກັບພຶດຕິກຳການທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງໃນດ້ານຈຳນວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ, ດ້ານຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ, ດ້ານໄລຍະເວລາທີ່ໃຊ້ໃນການທ່ຽວຊົມ, ດ້ານຈຸດປະສົງໃນການເດີນທາງທ່ຽວຊົມ, ດ້ານຊ່ວງເວລາໃນການທ່ຽວຊົມ, ດ້ານວັນທີ່ເລືອກມາທ່ຽວຊົມ, ດ້ານຜູ້ຮ່ວມເດີນທາງ, ດ້ານການມາທ່ຽວຊໍ້າ ແລະ ດ້ານການແນະນຳ-ບອກຕໍ່ຄົນອື່ນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

## 6. ຂໍ້ຂັດແຍ່ງ

ພວກເຮົາ ທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດໃດໆທັງນັ້ນ, ກໍລະນີມີການລະເມີດໃນຮູບການໃດກໍ່ຕາມ ພວກເຮົາມີຄວາມຍິນດີຂໍຮັບຜິດ ຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ

ກູນທິກາ ວິບູນປິ່ນ. (256). ພຶດຕິກຳ ແລະ ທັດສະນະຂອງນັກທ່ອງທ່ຽວທີ່ມີຕໍ່ການຈັດບໍລິການໃນແຫລ່ງທ່ອງທ່ຽວທີ່ມີບົດຮຽນຈາກຄວາມສູນເສຍອຸບັດຕິໄພ ແລະ ມໍລະນະໄພ: ກໍລະນີພິພິທະພັນການແພດສິຣິລາດ. ວິທະຍານິພົນປະລິນຍາເອກ. ສາຂາການຈັດການ. ຄະນະວິທະຍາການຈັດການ. ມະຫາວິທະຍາໄລສິລະປະກອນ.

ຈັນທະລີ ສີພາວັນ ແລະ ສີອຳໄພ ຈາຈອມແສງ. (2014). ຄວາມຄິດເຫັນຂອງນັກທ່ອງທ່ຽວຕໍ່ກັບການໃຫ້ບໍລິການ ຂອງສະຖານ ທີ່ທ່ອງທ່ຽວຫໍພິພິທະພັນແຫ່ງຊາດຫຼວງພະບາງ. ບົດໂຄງການຈົບຊັ້ນປະລິນຍາຕີ. ສາຂາວິຊາບໍລິຫານການທ່ອງທ່ຽວ. ມະຫາວິທະຍາໄລສຸພານຸວົງ.

ສີຣິວັນ ປີຕິວັນ. (2551). ປັດໄຈທີ່ສົ່ງຜົນຕໍ່ພຶດຕິກຳການທ່ອງທ່ຽວຂອງນັກທ່ອງທ່ຽວຊາວໄທກໍລະນີສຶກສາ: ບຶງສະອາກສະເຫລີມພະກຽດ ຈັງຫວັດສຸພັນບຸລີ. ບົດຄົ້ນຄວ້າອິດສະຫລະປະລິນຍາໂທ. ສາຂາວິຊາການຕະຫລາດ. ຄະນະບໍລິຫານທຸລະກິດ. ມະຫາວິທະຍາໄລລາດຊະມົງຄົນທັນບຸຣີ.

ສິຣິເພັນ ຢ່ຽມຈັນຍາ. (2555). ພຶດຕິກຳ ແລະ ການຕັດສິນໃຈເຂົ້າທ່ຽວຊົມພິພິທະພັນຕຳນັກສາຍສຸດທານະພະດົນໃນວັງສວນສຸນັນທາຂອງນັກທ່ອງທ່ຽວຊາວໄທ ແລະ ປັດໄຈສ່ວນປະສົມທາງການຕະຫລາດທີ່ມີອິດທິພົນຕໍ່ການຕັດສິນໃຈ. ລາຍງານການວິໄຈ. ມະຫາວິທະຍາໄລລາດຊະພັດສວນສຸນັນທາ.

ທິບພະວັນ ແພດຣັກ. (2549). ການປຽບທຽບພຶດຕິກຳ ແລະ ແນວໂນ້ມພຶດຕິກຳການທ່ອງທ່ຽວບູຮານສະຖານຂອງນັກທ່ອງທ່ຽວຊາວໄທ ແລະ ຕ່າງປະເທດທີ່ອຸທິຍານປະຫວັດສາດພະນະຄອນສີອະຍຸດທະຍາ. ບົດຄົ້ນຄວ້າອິດສະຫລະປະລິນຍາໂທ. ສາຂາວິຊາທຸລະກິດລະຫວ່າງປະເທດ. ຄະນະບໍລິຫານທຸລະກິດ. ມະຫາວິທະຍາໄລລາດຊະມົງຄົນທັນບຸຣີ.

ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2016). ສະຖິຕິຂອງນັກທ່ອງທ່ຽວ ແຂວງຫຼວງພະບາງ ປີ 2012-2016.

ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2017). ສະຖິຕິນັກທ່ອງທ່ຽວຂອງຫໍພິພິທະພັນແຫ່ງຊາດ ຫຼວງພະບາງ 2013-2017.

ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2018). ບົດສະຫລຸບການຈັດຕັ້ງປະຕິບັດວຽກງານປະຈຳປີ 2018 ແລະ ທິດທາງແຜນການ ເຄື່ອນໄຫວຽກງານປະຈຳປີ 2019. ແຂວງຫຼວງພະບາງ.

ອຳມະຣັດ ວົງເປັງ. (2550). ປັດໄຈທາງການຕະຫລາດທີ່ມີອິດທິພົນຕໍ່ການຕັດສິນໃຈທ່ອງທ່ຽວປະເທດໄທຂອງນັກທ່ອງທ່ຽວຊາວເອີຣົບ. ວິທະຍານິພົນປະລິນຍາໂທ. ຄະນະບໍລິຫານທຸລະກິດ. ມະຫາວິທະຍາໄລ ລາດຊະມົງຄົນທັນບຸຣີ.

The Colonial Wonderland of Luangprabang, Laos. Online. access from https://wearetravelgirls.com/the-colonial-wonderland-of-luang-prabang-laos/. accessed on November 7, 2018.

ຕາຕະລາງທີ 1. ຜົນການທົດສອບຄວາມສຳພັນລະຫວ່າງປັດໃຈສ່ວນບຸກຄົນດ້ານເພດ ແລະ ພຶດຕິກຳການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| ລຳດັບ | ປັດໃຈສ່ວນບຸກຄົນ | ພຶດຕິກຳນັກທ່ອງທ່ຽວຕ່າງປະເທດ | $\chi^2$ | df | Sig |
|---|---|---|---|---|---|
| 1 | ເພດ | ຈຳນວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 11.252 | 5 | 0.047* |
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 6.162 | 3 | 0.104 |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 6.828 | 4 | 0.145 |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 10.507 | 3 | 0.015* |
| 5 | | ຊ່ວງເວລາໃນການທ່ຽວຊົມ | 1.332 | 1 | 0.248 |
| 6 | | ວັນທີ່ເລືອກມາທ່ຽວຊົມ | 2.970 | 6 | 0.813 |
| 7 | | ຜູ້ຮ່ວມເດີນທາງ | 9.787 | 5 | 0.082 |
| 8 | | ການມາທ່ຽວຊ້ຳ | 4.056 | 2 | 0.132 |
| 9 | | ການແນະນຳ-ບອກຕໍ່ຄົນອື່ນ | 1.753 | 2 | 0.146 |

* ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ຕາຕະລາງທີ 2. ຜົນການທົດສອບຄວາມສຳພັນລະຫວ່າງປັດໃຈສ່ວນບຸກຄົນດ້ານອາຍຸ ແລະ ພຶດຕິກຳການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| ລຳດັບ | ປັດໃຈສ່ວນບຸກຄົນ | ພຶດຕິກຳນັກທ່ອງທ່ຽວຕ່າງປະເທດ | $\chi^2$ | df | Sig |
|---|---|---|---|---|---|
| 1 | ອາຍຸ | ຈຳນວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 91.381 | 25 | 0.000* |
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 7.916 | 15 | 0.927 |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 85.416 | 20 | 0.000* |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 43.043 | 15 | 0.000* |
| 5 | | ຊ່ວງເວລາໃນການທ່ຽວຊົມ | 7.245 | 5 | 0.203 |
| 6 | | ວັນທີ່ເລືອກມາທ່ຽວຊົມ | 62.536 | 30 | 0.000* |
| 7 | | ຜູ້ຮ່ວມເດີນທາງ | 96.442 | 25 | 0.000* |
| 8 | | ການມາທ່ຽວຊ້ຳ | 32.659 | 10 | 0.000* |
| 9 | | ການແນະນຳ-ບອກຕໍ່ຄົນອື່ນ | 39.147 | 10 | 0.000* |

* ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05

ຕາຕະລາງທີ 3. ຜົນການທົດສອບຄວາມສຳພັນລະຫວ່າງປັດໃຈສ່ວນບຸກຄົນດ້ານສະຖານະພາບ ແລະ ພຶດຕິກຳການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| ລຳດັບ | ປັດໃຈສ່ວນບຸກຄົນ | ພຶດຕິກຳນັກທ່ອງທ່ຽວຕ່າງປະເທດ | $\chi^2$ | df | Sig |
|---|---|---|---|---|---|
| 1 | ສະຖານະພາບ | ຈຳນວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 48.606 | 15 | 0.000* |
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 17.693 | 9 | 0.039* |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 44.692 | 12 | 0.000* |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 19.194 | 9 | 0.024* |

| | | | | | |
|---|---|---|---|---|---|
| 5 | | ຊ່ວງເວລາໃນການທ່ຽວຊົມ | 10.350 | 3 | 0.016* |
| 6 | | ວັນທີ່ເລືອກມາທ່ຽວຊົມ | 47.504 | 18 | 0.000* |
| 7 | | ຜູ້ຮ່ວມເດີນທາງ | 59.236 | 15 | 0.000* |
| 8 | | ການມາທ່ຽວຊໍ້າ | 10.204 | 6 | 0.116 |
| 9 | | ການແນະນໍາ-ບອກຕໍ່ຄົນອື່ນ | 15.602 | 6 | 0.016* |

* ມີຄວາມສໍາຄັນທາງສິຖິຕິທີ່ລະດັບ 0.05

ຕາຕະລາງທີ 4. ຜົນການທົດສອບຄວາມສໍາພັນລະຫວ່າງປັດໄຈສ່ວນບຸກຄົນດ້ານລະດັບການສຶກສາ ແລະ ພຶດຕິກໍາການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| **ລໍາດັບ** | **ປັດໄຈສ່ວນບຸກຄົນ** | **ພຶດຕິກໍານັກທ່ອງທ່ຽວຕ່າງປະເທດ** | $\chi^2$ | **df** | **Sig** |
|---|---|---|---|---|---|
| 1 | ລະດັບການສຶກສາ | ຈໍານວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 29.979 | 20 | 0.070 |
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 18.625 | 12 | 0.098 |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 37.517 | 16 | 0.002* |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 44.767 | 12 | 0.000* |
| 5 | | ຊ່ວງເວລາໃນການທ່ຽວຊົມ | 2.631 | 4 | 0.621 |
| 6 | | ວັນທີ່ເລືອກມາທ່ຽວຊົມ | 48.854 | 24 | 0.002* |
| 7 | | ຜູ້ຮ່ວມເດີນທາງ | 70.400 | 20 | 0.000* |
| 8 | | ການມາທ່ຽວຊໍ້າ | 19.036 | 8 | 0.015* |
| 9 | | ການແນະນໍາ-ບອກຕໍ່ຄົນອື່ນ | 9.101 | 8 | 0.334 |

* ມີຄວາມສໍາຄັນທາງສິຖິຕິທີ່ລະດັບ 0.05

ຕາຕະລາງທີ 5. ຜົນການທົດສອບຄວາມສໍາພັນລະຫວ່າງປັດໄຈສ່ວນບຸກຄົນດ້ານອາຊີບ ແລະ ພຶດຕິກໍາການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| **ລໍາດັບ** | **ປັດໄຈສ່ວນບຸກຄົນ** | **ພຶດຕິກໍານັກທ່ອງທ່ຽວຕ່າງປະເທດ** | $\chi^2$ | **df** | **Sig** |
|---|---|---|---|---|---|
| 1 | ອາຊີບ | ຈໍານວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 68.034 | 45 | 0.015* |
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 44.518 | 27 | 0.018* |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 71.071 | 36 | 0.000* |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 66.150 | 27 | 0.000* |
| 5 | | ຊ່ວງເວລາໃນການທ່ຽວຊົມ | 14.720 | 9 | 0.099 |
| 6 | | ວັນທີ່ເລືອກມາທ່ຽວຊົມ | 97.120 | 54 | 0.000* |
| 7 | | ຜູ້ຮ່ວມເດີນທາງ | 125.132 | 45 | 0.000* |
| 8 | | ການມາທ່ຽວຊໍ້າ | 49.986 | 18 | 0.000* |
| 9 | | ການແນະນໍາ-ບອກຕໍ່ຄົນອື່ນ | 23.342 | 18 | 0.178 |

* ມີຄວາມສໍາຄັນທາງສິຖິຕິທີ່ລະດັບ 0.05

ຕາຕະລາງທີ 6. ຜົນການທົດສອບຄວາມສໍາພັນລະຫວ່າງປັດໄຈສ່ວນບຸກຄົນດ້ານລາຍໄດ້ສະເລ່ຍຕໍ່ເດືອນ ແລະ ພຶດຕິກໍາການທ່ຽວຊົມຫໍພິພິທະພັນແຫ່ງຊາດຫຼວງພະບາງຂອງນັກທ່ອງທ່ຽວຕ່າງປະເທດ.

| **ລໍາດັບ** | **ປັດໄຈສ່ວນບຸກຄົນ** | **ພຶດຕິກໍານັກທ່ອງທ່ຽວຕ່າງປະເທດ** | $\chi^2$ | **df** | **Sig** |
|---|---|---|---|---|---|
| 1 | ລາຍໄດ້ສະເລ່ຍຕໍ່ເດືອນ | ຈໍານວນຄັ້ງທີ່ມາທ່ຽວຊົມຫໍພິພິທະພັນ | 41.038 | 15 | 0.000* |

| | | | | | |
|---|---|---|---|---|---|
| 2 | | ຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານ | 31.440 | 9 | 0.000* |
| 3 | | ໄລຍະເວລາທີ່ໃຊ້ໃນການທ່ຽວຊົມ | 81.735 | 12 | 0.000* |
| 4 | | ຈຸດປະສົງໃນການເດີນທາງທ່ຽວຊົມ | 48.276 | 9 | 0.000* |
| 5 | | ຊ່ວງເວລາໃນການທ່ຽວຊົມ | 0.818 | 3 | 0.845 |
| 6 | | ວັນທີ່ເລືອກມາທ່ຽວຊົມ | 62.439 | 18 | 0.000* |
| 7 | | ຜູ້ຮ່ວມເດີນທາງ | 109.610 | 15 | 0.000* |
| 8 | | ການມາທ່ຽວຊ້ຳ | 30.283 | 6 | 0.000* |
| 9 | | ການແນະນຳ-ບອກຕໍ່ຄົນອື່ນ | 17.001 | 6 | 0.009* |

* ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05